# ການປູກສາລີອາຫານສັດ

# (ສາລີແຂງ)

ສາລີອາຫານສັດເປັນພືດທີ່ປູກງ່າຍສາມາດເຕີບໂຕໄດ້ໃນດິນເກືອບທຸກປະເພດ,ທົນທານຕໍ່ພະຍາດແລະແມງໄມ້,ປູກໄດ້ທັງລະດູແລ້ງ ແລະລະດູຝົນໃຫ້ຜົນຜະລິດສູງ ເປັນພືດເສດຖະກິດສ້າງລາຍຮັບໃຫ້ແກ່ຄອບຄົວ, ໃບ,ລໍາຕົ້ນ ສາມາດນໍາມາປຸງແຕ່ງເປັນອາຫານທີ່ດີສໍາລັບສັດ





## 1. ການຄັດເລືອກພື້ນທີ່

ດິນທີ່ເໝາະສົມສໍາລັບປູກສາລີແມ່ນດິນຊາຍແກມຕົມເຊິ່ງໄດ້ແກ່ດິນແຄມຫ້ວຍນໍ້າລໍາເຊ,ນໍ້າບໍ່ຖ້ວມໃນຊ່ວງລະດູຝົນ, ຖ້າປູກສາລີຊ່ວງລະດູແລ້ງຕ້ອງມີລະບົບຊົນລະປະທານທີ່ຮັບປະກັນການສະໜອງນໍ້າໃນຊ່ວງທີ່ສາລີກໍາລັງຈະໃຫ້ຜົນຜະລິດ.



## 2. ການຄັດເລືອກແນວພັນ

ແນວພັນທີ່ເໝາະສົມສໍາລັບການປູກສາລີເພື່ອເປັນສິນຄ້າຄວນເປັນແນວພັນລູກປະສົມເຊັ່ນ: NK40, NK48, VN8960, LVN10, LVN14.





## 3. ລະດູການ ຫຼື ຊ່ວງເວລາທີ່ເໝາະສົມ

ສາລີຈັດຢູ່ໃນຈຳພວກພືດໄຮ່, ປູກງ່າຍ ແລະ ເຕີບໂຕໄວຖ້າຫາກ ຊາວສວນປູກຖືກຊ່ວງເວລາທີ່ເໝາະສົມ, ສາລີປູກໄດ້ທັງສອງ ລະດູຄືລະດູແລ້ງ ແລະ ລະດູຝົນ.

- ລະດູແລ້ງຄວນປູກຢູ່ໃນທ້າຍເດືອນ 10 ຫາກາງເດືອນ 11 (ຊ່ວງປາຍລະດູຝົນ).
- ລະດູຝົນຄວນປູກຊ່ວງທ້າຍເດືອນ 4 ຫາ ກາງເດືອນ 5.

ຖ້າຫາກປູກຫຼ້າຊ້າດິນຈະມີຄວາມຊຸ່ມຫຼາຍ ແລະ ວັດສະພືດຈະ ຫຼາຍເຮັດໃຫ້ຜົນຜະລິດບໍ່ໄດ້ຮັບຜົນດີ.





## 4. ການກະກຽມດິນກ່ອນປູກ

ການກະກຽມດິນປູກສາລີເຮັດໄດ້ຫຼາຍຮູບແບບເຊັ່ນ: ການ ປູກສາລີຮູບແບບເຂົ້າໄຮ່(ບໍ່ໄດ້ໄຖດິນ) ສະເພາະຊ່ວງ ລະດູຝົນ ແລະ ການປູກສາລີແບບໄຖດິນ(ສະເພາະຊ່ວງ ລະດູແລ້ງ ແລະ ລະດູຝົນ)

1. ການກຽມດິນແບບບໍ່ໄດ້ໄຖດິນ. ຄວນເລີ່ມຖາງສວນຢູ່ ຕາມແຄມເຊ, ຫວ້ຍຕ່າງໆແຕ່ທ້າຍເດືອນ 2 ຫາກາງ ເດືອນ 3 ປະໄວ້ປະມານ 1 ເດືອນເພື່ອໃຫ້ກິ່ງໄມ້ທີ່ ຖາງນັ້ນຕາຍ, ຈາກນັ້ນກາງເດືອນ 4 ແມ່ນຈູດແລະເຮັດ ຮົ້ວເພື່ອປູກໃນທ້າຍເດືອນ 4 ຫາກາງເດືອນ 5.
2. ການກຽມດິນປູກສາລີທີ່ມີການໄຖດິນຄວນໄຖ ດິນກ່ອນປູກສາລີທຸກຄັ້ງໃນພື້ນທີ່ໆເຄີຍປູກຫຼືປູກພືດ ຊະນິດອື່ນມາແລ້ວເຊັ່ນ: ສວນປູກພືດຜັກຕ່າງໆ,ໄຮ່ ເພື່ອຈະປູກສາລີໃນລະດູແລ້ງ. ຄວນໄຖດິນຕາກ ແດດປະໄວ້ປະມານ 7 ຫາ 15 ວັນເພື່ອຂ້າວັດສະພືດ ແລະ ທຳລາຍຮັງຂອງແມງໄມ້ສັດຕູພືດທີ່ຢູ່ໃນດິນ. ຫຼັງຈາກນັ້ນໄຖຕັດລວງຂອງກ້ອນຂີ້ໄຖອີກເທື່ອໜຶ່ງ ແລ້ວຍົກຮ່ອງ(ຄູປູກ)ເພື່ອປ້ອງກັນນ້ຳຂັງ.







# 5. ວິທີປູກສາລີ

ການປູກສາລີສາມາດເຮັດໄດ້2ວິທີຄື: ໃຊ້ເຄື່ອງຢອດເມັດ ແລະ ໃຊ້ຄົນປູກເອງ.

✎ ຖ້າໃຊ້ແຮງງານຄົນປູກຄວນມີໄລຍະຫ່າງແຖວຕໍ່ແຖວ 80 ຊັງຕີແມັດ, ຕົ້ນຫາຕົ້ນ 40-60 ຊັງຕີແມັດ, ຄວາມເລິກຂອງຂຸມປູກ 3-4 ຊັງຕີແມັດ. ຈຳນວນເມັດຕໍ່ຂຸມ2ເມັດ.ອັດຕາແນວປູກ 15-18 ກິໂລຕໍ່ເຮັກຕາ. ປູກໄດ້ປະມານ 4-7 ວັນສາລີຈະແຕກງອກເປັນຕົ້ນອ່ອນ, ຖ້າຫາກ ກາຍນີ້ແລ້ວບໍ່ອອກ ຫຼື ອອກບໍ່ສະໝ່ຳສະເໝີແມ່ນແນວພັນບໍ່ດີຫຼືມີແມງໄມ້ກັດກິນຈາວຂອງ ເບ້ຍສາລີ, ຕ້ອງໄດ້ມີການປູກສ້ອມຄືນໃໝ່.

✎ ຖ້າໃຊ້ເຄື່ອງຢອດເມັດອັດຕາແນວພັນ20-25 ກິໂລຕໍ່ເຮັກຕາ, ໄລຍະຫ່າງລະຫວ່າງຕົ້ນຕໍ່ຕົ້ນຈະຖີ່ກວ່າການປູກດ້ວຍຄົນ. ການປູກຖີ່ຫຼືປູກຫ່າງຈະຂຶ້ນກັບຄວາມອຸດົມສົມບູນຂອງດິນເຊັ່ນດຽວກັນ







# 6. ການໃຫ້ນ້ຳ

✎ ການໃຫ້ນ້ຳ.

ສາລີເປັນພືດທີ່ບໍ່ຕ້ອງການນ້ຳຫຼາຍແຕ່ກໍ່ຂາດນ້ຳບໍ່ໄດ້ເຊັ່ນດຽວກັນ. ຖ້າປູກສາລີລະດູຝົນແມ່ນບໍ່ມີຄວາມຈຳເປັນທີ່ຈະໃຫ້ນ້ຳເພາະລະດູຝົນຄວາມຊຸ່ມຊື່ນຂອງອາກາດມີຫຼາຍ. ທັງນີ້ກໍ່ປັດສະຈາກບໍ່ໄດ້ໃນຊ່ວງປູກສາລີໃໝ່ຫຼືຊ່ວງກຳລັງອອກຈາວຝົນອາດຈະມາຊ້າຫຼືມີການແຫ້ງແລ້ງຕ້ອງໄດ້ໃຫ້ນ້ຳ.

ຖ້າປູກຊ່ວງລະດູແລ້ງແມ່ນມີຄວາມຈຳເປັນຕ້ອງໃຫ້ນ້ຳແກ່ຕົ້ນສາລີອາທິດລະ1ຄັ້ງ,ເພາະຊ່ວງທຳອິດຝົນຫຼືນ້ຳໝອກຍັງມີຢູ່ແລະຈະເພີ່ມການໃຫ້ນ້ຳ2ຄັ້ງຕໍ່ອາທິດໃນຊ່ວງທີ່ອາກາດເລີ່ມແຫ້ງແລະຊ່ວງທີ່ຕົ້ນສາລີກຳລັງອອກດອກຈໍ່ໝາກແລະຈະຕັດການໃຫ້ນ້ຳເມື່ອສາລີເລີ່ມສຸກແກ່.

# 7. ການໃສ່ຝຸ່ນ





✎ ການໃສ່ຝຸ່ນ.

ສາລີຕ້ອງການຝຸ່ນໃນການສ້າງຮາກ, ລຳຕົ້ນ ແລະ ໃບທີ່ແຂງແຮງເພື່ອໃຫ້ຜົນຜະລິດທີ່ດີສຳລັບໝາກ ແລະ ເມັດ. ການໃສ່ຝຸ່ນແມ່ນມີຄວາມຈຳເປັນເຊັ່ນ: ຝຸ່ນຄອກແລະຝຸ່ນບົ່ມໃນອັດຕາ 2000 ກິໂລ/ເຮັກຕາ, ຖ້າໃຊ້ຝຸ່ນເຄມີແມ່ນສູດ 15-15-15 ຮອງພື້ນກ່ອນປູກໃນອັດຕາ 150 ກິໂລ/ເຮັກຕາ. ໃສ່ຝຸ່ນເລັ່ງສູດ 46-00-00 ໃນອັດຕາ 100 ກິໂລ/ເຮັກຕາ ຫຼັງຈາກສາລີມີອາຍຸ 20-25ວັນໂດຍໃສ່ຫ່າງຈາກເຫງົ້າ 15-20ຊມ ແລະ ຖົມໃນເວລານັ້ນອາດຈະເປັນການກຳຈັດວັດສະພືດໄປພ້ອມໆກັນ.

# 8. ການປ້ອງກັນ ແລະ ກຳຈັດການລະບາດຂອງສັດຕູພືດ

ສັດຕູຂອງສາລີປະກອບມີ: ໜູ ແລະ ແມງໄມ້ເຊັ່ນ: ບົ້ງຝຸງ, ມອດດິນ, ດວັ້ງເຈາະລຳຕົ້ນ, ເພັ້ຍອ່ອນ.

✎ ການປ້ອງກັນແມງສັດຕູພືດ: ຄວນມີການໄຖດິນຕາກໄວ້ເພື່ອທຳລາຍບ່ອນລີ້ຊ່ອນຂອງແມງໄມ້, ຄວນໃຊ້ແນວພັນທີ່ຕ້ານທານ, ເສຍຫຍ້າ. ຖ້າໃຊ້ພື້ນທີ່ເກົ່າຫຼາຍປີ ແລະ ເຫັນການລະບາດຂອງແມງໄມ້ຢູ່ເລື້ອຍໆ ແລະ ຮ້າຍແຮງຄວນໃຊ້ຢາປາບສັດຕູພືດເພື່ອປ້ອງກັນແມງໄມ້.

✎ ການກຳຈັດ, ໃຊ້ສານເຄມີສີດພົ່ນໃນຊ່ວງທີ່ມີການລະບາດ, ແຕ່ການນຳໃຊ້ຢາປາບສັດຕູພືດຕ້ອງລະມັດລະວັງ ແລະ ໄດ້ຮັບການປຶກສາຈາກວິຊາການທີ່ກ່ຽວຂ້ອງ.





# 9. ການເກັບກ່ຽວ



ສາລີແຂງ ຫຼື ສາລີອາຫານສັດມີອາຍຸ 120-130 ວັນ ສາມາດເກັບກ່ຽວໄດ້, ເຊິ່ງສາມາດສັງເກດໄດ້ເຊັ່ນລຳຕົ້ນ, ໃບແລະກາບຝັກຈະເລີ່ມມີສີເຫຼືອງ ຝັກຂອງສາລີຈະເລີ່ມກົ່ງລົງລຸ່ມນັ້ນໝາຍເຖິງສາລີສາມາດເກັບກ່ຽວໄດ້ແລ້ວ.



# 10. ການຕາກ

ການຕາກເປັນຂັ້ນຕອນທີ່ສຳຄັນທີ່ສຸດຂອງການປູກສາລີແຂງ, ຄວາມຊຸ່ມສາມາດເຮັດໃຫ້ສາລີເກີດເຊື້ອລາ ແລະ ສຸດທ້າຍເຮັດໃຫ້ສາລີບໍ່ມີຄຸນນະພາບ ແລະ ເຮັດໃຫ້ການປູກສາລີຂາດທຶນ. ສະນັ້ນ, ການຕາກຕ້ອງເອົາໃຈໃສ່ດັ່ງນີ້:

✎ ລະດູຝົນຄວນຕາກໃນທີ່ຮົ່ມເຊັ່ນ: ກ້ອງລ່າງເຮືອນ, ຖຽງນາແລະອື່ນໆ, ໂດຍການນຳເອົາສາລີທີ່ເກັບຈາກສວນທີ່ຍັງບໍ່ໄດ້ແກະກາບມາມັດເຮັດເປັນມັດຫ້ອຍໄວ້ ຫຼື ຕາກໄວ້ປະມານ 20-25 ວັນແລ້ວກໍ່ນຳມາແກະເມັດໄດ້ແລ້ວ.

✎ ລະດູແລ້ງຈະຕາກໄວ້ຄາກົກ, ຕາກໃສ່ແຫຍ່ງຊຽວປະໄວ້ກາງເດີ່ນບ້ານ, ໂດຍການລອກກາບປະໄວ້ຄາກົກປະມານ 3-5 ວັນກໍ່ນຳມາແກະໄດ້ ຫຼື ແກະກາບຕາກແດດໄວ້ປະມານ 3-5 ແດດກໍ່ແກະເມັດໄດ້.









## 11. ການແກະເມັດ











ສາລີທີ່ສາມາດແກະເມັດໄດ້ຕ້ອງແຫ້ງດີໂດຍການສັງເກດງ່າຍໆເຊັ່ນ: ຈັບຄອນເບິ່ງເມັດ,ແກະລອງເບິ່ງຫຼືອາດຈະຫັກເບິ່ງແກນທາງໃນ, ຖ້າສາລີແຫ້ງດີເວລາແກະເມັດໆຂອງສາລີຈະບໍ່ແຕກ,ແກະງ່າຍ,ປະຢັດເວລາ ແລະຕົ້ນທຶນ. ການແກະເມັດເຮັດໄດ້ຫຼາຍວິທີເຊັ່ນ: ໃຊ້ຄົນແກະ,ໃຊ້ເຄື່ອງທຸ່ນແຮງແລະໃຊ້ເຄື່ອງຈັກ. ການນຳໃຊ້ເຄື່ອງແຕ່ລະປະເພດແມ່ນຂື້ນກັບເງື່ອນໄຂຂອງແຕ່ລະຄອບຄົວ, ແຕ່ຖ້າປູກເປັນສິນຄ້າຕ້ອງໄດ້ນຳໃຊ້ເຄື່ອງກົນຈັກເຂົ້າຊ່ວຍ.

## 12. ການຂາຍ

ການຂາຍເປັນຂັ້ນຕອນສຸດທ້າຍຂອງການປູກສາລີ, ກ່ອນຈະຂາຍສາລີທຸກໆຄັ້ງສະມາຊິກທັງໝົດຕ້ອງປະຊຸມ ແລະ ແຈ້ງຈຳນວນຜົນຜະລິດຂອງຕົນໃຫ້ກຸ່ມຊາບ, ຈາກນັ້ນຫົວໜ້າກຸ່ມຈະສັງລວມຜົນຜະລິດທັງໝົດເພື່ອແຈ້ງແລະປະສານກັບພາກລັດແລະບໍລິສັດຮັບຊາບ. ຫຼັງຈາກນັ້ນທາງບໍລິສັດຈະສົ່ງພະນັກງານມາລວບລວມຜົນຜະລິດທັງໝົດພ້ອມທັງຊັ່ງນໍ້າໜັກ, ເອົາຜົນຜະລິດທັງໝົດຂຶ້ນລົດຂົນສົ່ງແລ້ວບໍລິສັດຈະຈ່າຍເງິນສົດໃຫ້ກັບຄອບຄົວຕາມສັນຍາທີ່ເຊັນຮ່ວມກັນ.






ບໍລິສັດ ໄຟຟ້ານໍ້າເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່
ມີນາ 2013